# ເສີມສ້າງຄວາມເຂັ້ມແຂງ ແລະໃຫ້ພໍ່ແມ່ມີສ່ວນຮ່ວມໃນການຝຶກເດັກໂອທິສຕິກ The Include and Empower Parents of Children with Autism in Education



| ID: | Author: | Organization: | Created date: |
|---|---|---|---|
| 93 | AFA | AFA | 2020-10-01 00:00:00 |

## 1. ກ່ຽວກັບສະພາບບັນຫາທີ່ໂຄງການຢາກຈະແກ້ໄຂ / About the problem that project want to solve.

- ອົງຄວາມຮູ້ກ່ຽວກັບໂອທິສຕິກຢູ່ບ້ານເຮົາຍັງບໍ່ຫລາຍ ເຮັດໃຫ້ເດັກໂອທິສຕິກ ຫລື ເດັກມີພັດທະນາການຊ້າຫລາຍຄົນເສຍໂອກາດໃນການກວດພົບ ແລະ ໄດ້ຮັບການຊ່ວຍເຫລືອ ແຕ່ ຫົວທີ.
- ໂອທິສຕິກ ບໍ່ແມ່ນພະຍາດ ດັ່ງນັ້ນ, ຈື່ງບໍ່ມີຢາປົວ ທີ່ກິນແລ້ວເຊົາ ແຕ່ວ່າ ໃຫ້ການກະຕຸ້ນເດັກຜ່ານການຮຽນ ເພີ່ມໂອກາດໃຫ້ເຂົາເຈົ້າສາມາດສື່ສານ ແລະ ມີປະຕິສໍາພັນໃນສັງຄົມໄດ້ດີຂື້ນ.
- ນອກນັ້ນຍັງສາມາດຊ່ວຍຫລຸດ ບັນຫາພຶດຕິດກໍາໄດ້ເປັນຢ່າງດີ.
- ຍິ່ງເດັກໄດ້ຮັບການຝຶກແອບໄວເທົ່າໃດ ໂອກາດພັດທະນາຍິ່ງສູງຂື້ນເທົ່ານັ້ນ.
- ການບໍລິການສະເພາະແກ່ບຸກຄົນໂອທິສຕິກແບບຮອບດ້ານ ໃນປະເທດລາວ ບໍ່ພຽງພໍ.

## 2. ໂຄງການໄດ້ເຮັດຫຍັງແດ່ເພື່ອແກ້ໄຂບັນຫາ / About how the project solve the problems

1. **ສ້າງຄວາມຮັບຮູ້ໃຫ້ສັງຄົມ**

• ຈັດພິມແຜ່ນພັບຂອງສະມາຄົມເພື່ອຄົນໂອທິສຕິກ

• ຈັດພິມປື້ມຄູ່ມື ການຝຶກເດັກໂອທິສຕິກ

- ຄັດກອງເດັກຕໍ່ເນື່ອງ

- ຈັດກິດຈະກໍາສະເຫລີມສະຫລອງວັນໂອທິສຕິກໂລກ ຢູ່ແຂວງເປົ້າໝາຍ

2. **ສ້າງຄວາມເຂັ້ມແຂງໃຫ້ພໍ່ແມ່**

- ສ້າງຄູ່ມືການຝຶກອົບຮົມ

- ສ້າງສື່ອຸປະກອນການຮຽນ ແລະ ການສອນ

- ຈັດຝຶກອົບຮົມໃຫ້ຄູ ແລະ ຜູ້ປົກຄອງ

- ສະໜອງໃຫ້ຄໍາປຶກສາໂດຍຊ່ຽວຊານຈາກຕ່າງປະເທດ ເປັນປົກກະຕິ

## 3. ຜົນສໍາເລັດຂອງໂຄງການ / Results of the project

### ຜົນສໍາເລັດ ວຽກງານສ້າງຄວາມຮັບຮູ້ໃຫ້ສັງຄົມ

- ເປີດໂອກາດໃຫ້ເດັກໄດ້ຮັບການຊ່ວຍເຫລືອ, ໃຫ້ຄວາມຮູ້ພໍ່ແມ່ໃນການຝຶກແອບລູກ.
- ສ້າງເຄືອຄ່າຍຜູ້ປົກຄອງ, ສ້າງສາຍສໍາພັນທີ່ດີ ກັບໂຮງຮຽນອະນຸບານສຶກສາແຂວງຈໍາປາສັກ.
- ຄະນະອໍານວຍການໄດ້ຄວາມຮູ້ກ່ຽວກັບໂອທິສຕິກ ແລະ ການຮຽນຮ່ວມ.
- ການຮ່ວມມືລະຫວ່າງສະມາຄົມ ແລະ ໂຄງການວອຍ ໄດ້ເປັນທີ່ຮັບຮູ້ໃນລະດັບພາກພື້ນ.
- ສັງລວມອົງຄວາມຮູ້ໄວ້ເປັນປຶ້ມ ເພື່ອເປັນບ່ອນອີງໃນການໃຫ້ຄໍາປຶກສາ ໃຫ້ມີມາດຕະຖານດຽວກັນ.
- ໄດ້ທິດທາງແກ້ໄຂບັນຫາຊ່ວຍພໍ່ແມ່
- ເດັກໂອທິສຕິກຈໍານວນ 15 ຄົນ ໄດ້ເຂົ້າຮ່ວມກິດຈະກໍາ.
- ສ້າງສາຍສໍາພັນກັບພາກລັດກ່ຽວຂ້ອງ ແລະ ສ້າງຄວາມສາມັກຄີພາຍໃນສະມາຊິກ ຄູ ແລະ ພໍ່ແມ່.

### ຜົນສໍາເລັດ ວຽກງານສ້າງຄວາມເຂັ້ມແຂງໃຫ້ພໍ່ແມ່

- ໄດ້ເນື້ອໃນການຝຶກທີ່ໄດ້ມາດຕະຖານສາກົນທີ່ສາມາດເຜີຍແຜ່ໄດ້ໄລຍະຍາວ.
- ຄວາມຮູ້ຫລາຍອັນທີ່ເປັນພາສາອັງກິດ ໄດ້ຮັບການແປ ແລະ ຮຽບຮຽງເປັນພາສາລາວ ແລະ ພ້ອມນໍາໃຊ້ ແລະ ເຜີຍແຜ່ໃນວົງກວ້າງ
- 144 ຄົນ ໄດ້ຮັບການຝຶກອົບຮົມ ຫົວຂໍ້ວິທີການສອນເດັກໂອທິສຕິກ ໂດຍຊ່ຽວຊານຝຣັ່ງ (ໃນນັ້ນມີ 31 ຄົນໂອທິສຕິກ, 82 ພໍ່ແມ່ ແລະ 31 ຄູ ແລະ ແພດໝໍ).
- 106 ຄົນ ໄດ້ຮັບການຝຶກອົບຮົມ ຫົວຂໍ້ ວັດທະນະທໍາຂອງຄົນໂອທິສຕິກ ແລະ ການກະຕຸ້ນການສື່ສານ ໂດຍຊ່ຽວຊານເຢຍລະມັນ (ໃນນັ້ນລວມມີທັງພໍ່ແມ່ ແລະ ຄູ).
- 73 ຄົນ ໄດ້ຮັບການຝຶກ ອົບຮົມກ່ຽວກັບການຮັບມືກັບພຶດຕິກໍາລູກ ໂດຍຊ່ຽວຊານຈາກປະເທດຝຣັ່ງ (ໃນນັ້ນລວມມີທັງພໍ່ແມ່ ແລະ ຄູ).
- 20 ພໍ່ແມ່ ຢູ່ນະຄອນຫລວງວຽງຈັນ ໄດ້ຮັບຄໍາປຶກສາກັບ ຊ່ຽວຊານຝຣັ່ງ, ເຢຍລະມັນ ແລະ ອິດສະຕາລີ.
- 30 ພໍ່ແມ່ຢູ່ນະຄອນປາກເຊ ໄດ້ຮັບຄໍາປຶກສາ ຊ່ຽວຊານຝຣັ່ງ, ເຢຍລະມັນ ແລະ ອິດສະຕາລີ.
- 5 ພໍ່ແມ່ ຈາກແຂວງສະຫວັນນະເຂດໄດ້ຮັບຄໍາປຶກ ສາຈາກຊ່ຽວຊານເຢຍລະມັນ.
- 65 ເດັກໂອທິສຕິກ ໄດ້ຖືກຕິດຕາມ ແລະ ປະເມີນ ວິເຄາະວິໃຈການຮຽນໂດຍຊ່ຽວຊານ ຝຣັ່ງ, ເຢຍລະມັນ ແລະ ອິດສະຕາລີ ຕໍ່ເນື່ອງ.
- 42 ຄູຝຶກໄດ້ຮັບຄໍາປຶກສາ ກ່ຽວກັບບັນຫາຂອງນັກຮຽນຕົນເອງ ຈາກຊ່ຽວຊານ ຝຣັ່ງ, ເຢຍລະມັນ ແລະ ອິດສະຕາລີ ຕໍ່ເນື່ອງ.

## 4. ປັດໄຈສູ່ຜົນສໍາເລັດ / Factors of success

- ກິດຈະກໍາຊ່ວຍແກ້ບັນຫາໃຫ້ພໍ່ແມ່, ຜູ້ປົກຄອງໄດ້ແທ້
- ເນື້ອໃນໂຄງການມາຈາກຄວາມຕ້ອງການ ແລະ ສອດຄ່ອງກັບຜູ້ໄດ້ຮັບຜົນປະໂຫຍດ
- ເນື້ອໃນຂອງໂຄງການສອດຄ່ອງກັບແຜນພັດທະນາແບບຍືນຍົງຂອງພາກລັດ
- ໝາກຜົນ ແລະ ຜົນໄດ້ຮັບຂອງໂຄງການມີຄວາມສອດຄ່ອງ ແລະ ກົມກຽວກັນ
- ຫຼັງຈາກສິ້ນສຸດໂຄງການພວກເຮົາໄດ້ຮຽບຮຽງເນື້ອໃນປຶ້ມຄູ່ມືຝຶກເດັກໂອທິສຕິກທີ່ມີມາດຕະຖານໃຫ້ຜູ້ປົກຄອງສາມາດນໍາໃຊ້ຝຶກເດັກໄດ້ ແລະ ເພື່ອສົ່ງເສີມໃຫ້ເກີດມີຄວາມຕໍ່ເນື່ອງ
- ມີການຕິດຕາມ ແລະ ປະເມີນຜົນຂອງໂຄງການຕາມແຕ່ລະໄລຍະໂດຍໃຫ້ຜູ້ໄດ້ຮັບຜົນປະໂຫຍດມີສ່ວນຮ່ວມ
- ຕ້ອງມີບຸກຄະລາກອນທີ່ເຂົ້າໃນໜ້າວຽກ ແລະ ມີງົບປະມານໃນການຈັດກິດຈະກໍາ
- ຜູ້ຮັບຜິດຊອບໂຄງການຕ້ອງເຂົ້າໃຈໃນໜ້າວຽກຢ່າງລະອຽດ ແລະ ຈັດສັນໜ້າວຽກໃຫ້ຖືກກັບຄວາມສາມາດຂອງທີມງານ
- ການຈັດສັນເວລາໃນການຈັດຕັ້ງປະຕິບັດໃຫ້ດີ, ການປະສານງານຕ້ອງເຂົ້າໃຈງ່າຍ ແລະ ຈະແຈ້ງ

## 5. ຂໍ້ຈໍາກັດທີ່ເຮັດໃຫ້ບໍ່ສໍາເລັດຜົນໄດ້ດີ / Limitations

- ບຸກຄະລາກອນຍັງມີຈຳນວນກັດ
- ບຸກຄະລາກອນໃນອົງກອນຍັງຂາດຄວາມຮູ້ທາງດ້ານພາສາອັງກິດ
- ເວລາໃນການອະນຸມັດງົບປະມານຫຼ້າຊ້າ
- ບາງຄັ້ງການປະສານງານຍັງຂາດຄວາມສັດເຈນ ແລະ ຈະແຈ້ງ
- ການວາງແຜ່ນກິດຈະກຳກັບການຈັດຕັ້ງປະຕິບັດຕົວຈິງມີການຄາດເຄືອນ

## 6. ຂໍ້ແນະນຳສຳລັບຜູ້ທີ່ສົນໃຈຢາກທົດລອງນຳໃຊ້ / Recommendations for scaling up

- ຜູ້ຂຽນໂຄງການ ແລະ ຜູ້ໄດ້ຮັບຜົນປະໂຫຍດຕ້ອງມີສ່ວນຮ່ວມໃນການອອກແບບແຜນກິດຈະກຳ
- ຂໍ້ມູນທີ່ຈະນຳມາໃຊ້ຕ້ອງເປັນຂໍ້ມູນທີ່ຈິງແທ້ ແລະ ຈະຕ້ອງອອກມາຈາກກຸ່ມເປົ້າໝາຍໂດຍກົງ
- ການອອກແບບກິດຈະກຳຈະຕ້ອງໃຫ້ແທດເໝາະກັບກຸ່ມເປົ້າໝາຍລວມເຖິງແທດເໝາະກັບຄວາມເປັນຈິງຂອງບ້ານເຮົາ
- ສາມາດເປັນຜູ້ຮັບຟັງທີ່ດີໄດ້, ເຂົ້າເຖິງຈິດໃຈ ແລະ ຄວາມຕ້ອງການຂອງກຸ່ມເປົ້າໝາຍໄດ້ຢ່າງທ່ອງແທ້







